

ຜູ້ທຳນວາຍໃນພັນທະສັນຍາໃໝ່



“ຂອງປະທານຈາກພຣະວິນຍານນັ້ນ ມີຢູ່ຫລາຍຢ່າງດ້ວຍກັນ, ແຕ່ແມ່ນພຣະວິນຍານອົງດຽວກັນ. ງານຮັບໃຊ້ມີ
ຫລາຍຢ່າງຕ່າງກັນ ແຕ່ມີອົງພຣະຜູ້ເປັນເຈົ້າອົງດຽວກັນ. ຄວາມສາມາດໃນການດຳເນີນງານມີຫລາຍຢ່າງຕ່າງ
ກັນ, ແຕ່ແມ່ນພຣະເຈົ້າອົງດຽວກັນ ທີ່ໃຫ້ຄວາມສາມາດແກ່ທຸກຄົນ ສຳລັບງານທີ່ເຂົາຮັບໃຊ້ນັ້ນ.”

1 ໂກຣິນໂທ 12:4-6

ຈາກພຣະຄຳມາລະກີໄປ, 400 ປີຜ່ານໄປໂດຍບໍ່ມີຄຳທຳນວາຍຂອງໃຜເລີຍ, ຜ່ານທາງຄົນຂອງພຣະເຈົ້າ. ຍ້ອນຄວາມມືດງຽບນີ້, ຊາວອິດສະຣາເອນຈຶ່ງຖືວ່າ ໜັງສືຕ່າງໆໃນພຣະຄຳພີໄດ້ສິ້ນສຸດລົງແລ້ວ (ໜັງສືຕ່າງໆທີ່ປະກອບກັນເປັນ ພັນທະສັນຍາເດີມ).

ຢ່າງໃດກໍ່ຕາມ, ພຣະເຈົ້າບໍ່ໄດ້ຍັງຄົງມືດງຽບອີກດົນຕໍ່ໄປ. ເມື່ອເວລາອັນເໝາະ ສົມ, ພຣະອົງໄດ້ຊົງສົ່ງຜູ້ທຳນວາຍຄົນໃໝ່: ໂຢຮັນຜູ້ໃຫ້ບັບຕິສະມາ (ມທ 11:7-9). ຫລັງຈາກຊ່ວງເວລານັ້ນ, ຜູ້ທຳນວາຍກໍ່ໄດ້ປາກົດ. ພວກເຂົາໄດ້ ຕອບຮັບການຊົງເອີ້ນ, ໃນຫລາຍໆວຽກງານທີ່ໄດ້ຮັບນັ້ນກໍ່ຄື: ການຂຽນພຣະຄຳ ພີໃນພັນທະສັນຍາໃໝ່

ບົດບາດຂອງຜູ້ທຳນວາຍທີ່ເປັນຊາຍແລະຍິງ ເຫລົ່ານີ້ແມ່ນຫຍັງ? ພວເຂົາແມ່ນ ໃຜ? ມີຜູ້ທຳນວາຍປອມດັ່ງທີ່ມີໃນພັນທະສັນຍາເດີມບໍ?





- ບົດບາດຂອງຜູ້ທຳນວາຍໃນພັນທະສັນຍາໃໝ່
- ຜູ້ທຳນວາຍໃນພັນທະສັນຍາໃໝ່:
  - ພຣະເຢຊູ, ຜູ້ທຳນວາຍທີ່ໄດ້ຮັບການກ່າວເຖິງ
  - ພວກສາວົກ ແລະ ພວກຜູ້ທຳນວາຍ
  - ຜູ້ທຳນວາຍທີ່ເປັນຜູ້ຍິງ
  - ເພື່ອນຮ່ວມງານຂອງ ອຈ ໂປໂລ
  - ຜູ້ທຳນວາຍທຽມເທັດ

ບົດບາດຂອງຜູ້ທຳນວາຍໃນພັນທະສັນຍາໃໝ່

"ແຕ່ພວກທີ່ປະກາດພຣະທຳກໍເວົ້າກັບມະນຸດ ເພື່ອໃຫ້ເສີມສ້າງພວກເຂົາຈະເລີນຂຶ້ນ ແລະເປັນການໜູນໃຈ ແລະ ເລົ້າໂລມໃຈພວກເຂົາ." 1 ໂກຣິນໂທ 14:3

ໃນພັນທະສັນຍາໃໝ່ ການທຳນວາຍແມ່ນນຳສະເໜີໃນຖານະຂອງປະທານຈາກພຣະວິນຍານບໍຣິສຸດ, ເຊິ່ງຖືກຖອກເທລົງມາຢ່າງອຸດົມສົມບູນ (ຣ 12:6). ໃນໂບດໜຶ່ງ, ອາດຈະມີຜູ້ເຜີຍພຣະວັດຈະນະຈຳນວນຫລາຍທີ່ຜັດປ່ຽນກັນເວົ້າ (1 ກຣທ 14:29-31).

ໃນບົດບາດໃດທີ່ຜູ້ເຜີຍພຣະວັດຈະນະເຫລົ່ານີ້ໄດ້ເຮັດ? (ພນມ 19:10; 1:1; ອຟຊ 4:11-12; 1 ກຣທ 14:3; ກຈກ 15:32).

ພັນທະກິດຫລັກ ແມ່ນ ການນຳຜູ້ຄົນມາຫາພຣະເຢຊູ

ເພື່ອເປັນພະຍານ ໃຫ້ແກ່ພຣະເຢຊູ



ພວກເຂົາເປີດເຜີຍເຫດການ ຕ່າງໆ ຈົນເຖິງປະຈຸບັນ


ບອກເຖິງອະນາຄົດ



ເພື່ອສ້າງຄຣິດຕະຈັກທີ່ ເຂັ້ມແຂງ ແລະ ສາມາດ ຕ້ານທານການໂຈມຕີຂອງ ສັດຕູໄດ້

ເພື່ອການເສີມສ້າງ





ເພື່ອເຮັດໃຫ້ເຫັນເຖິງຄວາມ ບາບ, ຜູ້ຄົນຈຶ່ງກັບໃຈ

ການໜູນໃຈ ແລະ ຕັກເຕືອນ



ທ່ານ ຢູດາ ແລະ ທ່ານສີລາ ແມ່ນຖືກສົ່ງໄປທີ່ໂບດຕ່າງໆ ເພື່ອຈຸດປະສົງນີ້

ເພື່ອປອບໂຍນ













ภาพทำมอายใน ພັນທະສັນຍາໃໝ່

ພຣະເຢຊູ ຜູ້ທຳນວາຍທີ່ຖືກກ່າວເຖິງ

“ພຣະເຈົ້າຢາເວ ພຣະເຈົ້າຂອງພວກເຈົ້າຈະສົ່ງຜູ້ທຳນວາຍຜູ້ໜຶ່ງເໝືອນດັ່ງຂ້າພະເຈົ້ານີ້ ຈາກປະຊາຊົນໃນຊາດຂອງພວກເຈົ້າເອງມາໃຫ້ແທນ ແລະພວກເຈົ້າຕ້ອງເຊື່ອຟັງເພິ່ນ.” ພຣະບັນຍັດສອງ 18:15


ຜູ້ຄົນໃນຍຸກພຣະເຢຊູ ໄດ້ຖືວ່າ ພຣະເຢຊູຊົງເປັນຜູ້ທຳນວາຍ (ມທ 21:11; ມລກ 6:15; ລກ 7:16; ຢຮ 6:14).

ພຣະອົງເອງກໍ່ຊົງເອີ້ນພຣະອົງວ່າ ຜູ້ທຳນວາຍເຊັ່ນກັນ (ມລກ 6:4; ລກ 13:33).

ເປໂຕ ໄດ້ກ່າວຊັດເຈນວ່າພຣະອົງຊົງເປັນ ພຣະເມຊີອາ ທີ່ໂມເຊແລະຜູ້ເຜີຍພຣະວັດຈະນະຄົນອື່ນໆໄດ້ກ່າວເຖິງ (ພບຍສ. 18:15; ກຈກ 3:18-26).

ແຕ່ພຣະເຢຊູບໍ່ໄດ້ຊົງບໍ່ໄດ້ຂຽນຄຳທຳນວາຍເຫລົ່ານັ້ນ ເພາະພຣະອົງຊົງເປັນພຣະຄຳ (ຢຮ 1:1).







ພຣະອົງບໍ່ໄດ້ຊົງເປັນພຽງ “ແສງສະຫວ່າງທີ່ສ່ອງລົງໃນບ່ອນມືດ,”ດັ່ງທີ່ຜູ້ທຳນວາຍຄົນອື່ນໆເປັນເທົ່ານັ້ນ, ແຕ່ພຣະອົງຊົງເປັນແສງສະຫວ່າງ (2 ປຕ 1:19; ຢຮ 1:9; 8:12).

ວຽກງານຂອງພຣະອົງຊົງເໜືອກວ່າຜູ້ທຳນວາຍທັງປວງ. ພຣະອົງເປັນຜູ້ດຽວທີ່ສາມາດປະທານຊີວິດນິຣັນໃຫ້ແກ່ພວກເຮົາທຸກຄົນ, ໂດຍການສິ້ນພຣະຊົນ ແລະ ຟື້ນຄືນພຣະຊົນຂອງພຣະອົງ



ພວກສາວົກ ແລະ ພວກຜູ້ທຳນວາຍ

“ຊຶ່ງໃນສະໄໝກ່ອນ ພຣະອົງບໍ່ໄດ້ໃຫ້ມະນຸດສະໂລກຮູ້ຄວາມເລິກລັບນີ້ ແຕ່ບັດນີ້ພຣະອົງໄດ້ເປີດເຜີຍເລື່ອງນັ້ນ ໃຫ້ແກ່ບັນດາອັກຄະສາວົກທີ່ ບໍຣິສຸດຂອງພຣະອົງ ແລະພວກຜູ້ປະກາດພຣະທຳໂດຍທາງພຣະວິນຍານ.” ເອເຟໂຊ 3:5


ພວກສາວົກ ແລະ ຜູ້ທຳນວາຍໃນພັນທະສັນຍາໃໝ່ ມີລັກສະນະຮ່ວມກັນດັ່ງນີ້:

- ເປັນຜູ້ທີ່ພຣະເຈົ້າສົ່ງມາ (ລກ 11:49)
- ໄດ້ຮັບຂອງປະທານເພື່ອນຳຄຣິດຕະຈັກ (1 ກຣທ 12:28-29; ອຟຊ 4:11-12)
- ເປັນຮາກຖານຂອງຄຣິດຕະຈັກ ອຟຊ 2:20)
- ໄດ້ຮັບນິມິດ (ອຟຊ 3:5)
- ຊື່ນຊົມຍິນດີໃນຄວາມຍຸຕິທຳ (ພນມ 18:20)

ເມື່ອມີການກ່າວເຖິງທັງສອງກຸ່ມນີ້ພ້ອມກັນ ຕຳແໜ່ງຂອງອັກຄະສາວົກຈະມາກ່ອນຜູ້ທຳນວາຍ (ຍົກເວັ້ນໃນພຣະທຳລູກາ 11:49). ເປໂຕ ປຽບທຽບກັບຜູ້ທຳນວາຍໃນສະໄໝບູຮານ (2 ປຕ 3:2).

ອັກຄະສາວົກໄດ້ຮັບມອບໝາຍເປັນພິເສດຈາກພຣະເຢຊູໂດຍກົງ ໃຫ້ເປັນພະຍານເຖິງການຟື້ນຄືນພຣະຊົນ (ກຈກ 10:40-41).






ໃນພັນທະສັນຍາໃໝ່ກ່າວເຖິງຜູ້ທຳນວາຍຫລາຍທ່ານ: ບາຣະນາບາ (ອັກຄະສາວົກ), ຊີໂມນ, ລູກີໂອ, ມານາເອນ, ໂປໂລ (ອັກຄະສາວົກ), ຢູດາ, ຊີລາ, ແລະ ອາຄະໂບ (ກຈກ 11:27; 13:1; 15:32; 19:6-7; 21:10).



ຜູ້ທຳນວາຍທີ່ເປັນຜູ້ຍິງ

"ຟີລິບມີລູກສາວສີ່ຄົນທີ່ຍັງບໍ່ທັນແຕ່ງງານເທື່ອ ແລະ ຕ່າງກໍເປັນຜູ້ປະກາດພຣະທຳ" (ກຈກ 21:9 NVI)



ຜູ້ທຳນວາຍພຽງຄົນດຽວທີ່ໄດ້ລະບຸຊື່ໄວ້ ໃນພັນທະສັນຍາໃໝ່ ມີພຽງນາງ ອານາ "ໄດ້ກ່າວເຖິງກ່າວເຖິງພຣະກຸມມານ [ເຢຊູ] ໃຫ້ແກ່ທຸກຄົນທີ່ເຝົ້າລໍຄອຍການໄຖ່ກູ່ເຢຣູຊາເລັ້ມ " (ລກ 2:36-38).

ລູກສາວທັ້ງສີ່ຄົນຂອງຟີລິບ ຜູ້ປະກາດຂ່າວປະເສີດນັ້ນ ກໍໄດ້ຮັບຂອງປະທານແຫ່ງການປະກາດພຣະທຳຄືກັນ (ກຈກ 21 :8-9).

ຫລາຍໄປກວ່ານັ້ນ, ການປະກາດພຣະທຳຍັງຖືກກ່າວເຖິງວ່າ ເປັນຂອງປະທານທີ່ມີໄດ້ທັງຜູ້ຍິງ ແລະ ຜູ້ຊາຍ (1 ກຣທ 11:4-5).



ໂຢເອນ ໄດ້ກ່າວໄວ້ລ່ວງໜ້າວ່າ ພຣະວິນຍານບໍຣິສຸດ ຈະຊົງເຮັດໜ້າທີ່ ເພື່ອໃຫ້ລູກຊາຍ ຍິງ ຄົນໜຸ່ມ, ຊະລາ ຕະຫລອດທາດຍິງຊາຍ ໄດ້ ປະກາດພຣະທຳ (ຢອ 2:28-29).





ເພື່ອນຮ່ວມງານຂອງອາຈານໂປໂລ

“ຕີໂມທຽວລູກຂອງເຮົາເອີ‍ຍ, ເຮົາຂໍມອບຄຳແນະນຳນີ້ແກ່ເຈົ້າ ຕາມທີ່ມີຄຳທຳນວາຍກ່າວ
ໄວ້ກ່ຽວກັບເຈົ້າເມື່ອກ່ອນນັ້ນ ຈົ່ງໃຊ້ຖ້ອຍຄຳເຫຼົ່ານັ້ນເປັນອາວຸດ ເພື່ອຕໍ່ສູ້ດ້ວຍໃຈກ້າຫານ.”
1 ຕີໂມທຽວ 1:18




ນອກຈາກພວກອັກຄະສາວົກ, ຜູ້ທຳນວາຍຜູ້ຊາຍ ແລະ ຜູ້ຍິງແລ້ວ, ກໍ່ຍັງມີ
ການກ່າວເຖິງຜູ້ຊ່ວຍບາງຄົນຂອງອາຈານໂປໂລ, ເຊິ່ງມີຂອງປະທານແຫ່ງການ
ແບ່ງປັນພຣະວັດຈະນະເຊັ່ນດຽວກັນກັບຊີລາ ແລະ ບາຣະນາບາ ໄດ້ແກ່:

ຕີໂມທຽວ



ມີການທຳນວາຍ
(1 ຕມທ 1:18). ເພີ່ນເປັນເພື່ອນຮ່ວມງານໃນການຂຽນຈົດໝາຍ
ສະບັບຕ່າງໆ ສົ່ງໄປ ໄດ້ແກ່: 2 ກຣທ (2 ກຣທ 1:1); ຟີລິບປອຍ
(ຟລປ 1:1); ໂກໂລຊາຍ (ກລຊ 1:1); 1 ເທສະໂລນີກ (1 ທສລນ.
1:1); 2 ເທສະໂລນີກ (2 ທສລນ 1:1); ຟີເລໂມນ (ຟລມ 1:1).

ຕີໂຕ



ທ່ານໄດ້ປະຕິບັດໜ້າທີ່ໃນລັກສະນະການທຳນວາຍ
ຫລາຍປະການເຊັ່ນ: ການເສີມສ້າງ (2 ກຣທ 8:6);
ການໜູນໃຈ (ຕີໂຕ 2:6, 9, 15); ແລະ ການປອບ
ໂຍນໃຈ (2 ກຣທ 7:13)



ผู้ทำนอายหมเหัด

"พวกที่รักเอีย, ย่าเชื่อวิมยานทุกๆดวง แต่จิ่งพิสูดวิมยานทังหลายมันว่า มาจากพระเจ้าหลิบ่ เพาะว่ามีผู้ทำนอายปอมหลายคิมได้ออกไปในโลก." 1 โยฮัน 4:1




พระเยซูชิงเตือนว่า จะมีผู้ปะกาดพระทำปอมเกิดขึ้น, ผู้ที่พระอิงชิงเอิ้นว่า"หมาป่าที่ดุร้าย" (มท 24:24; 7:15). ผู้ทำนอายปอมนี้เกิดขึ้นแม่นแต่ในสะไหมยุกทำอิดของคริดตะจัก (1 ยด 4:1).

อจ โปโลเตือนชาวเอเฟโซว่า "หมาป่าที่ดุร้าย" จะเกิดขึ้นท่ามกางพวกเขา (กจท 20:29และได้เตือนชาวโกรินโทกั่วกับ ผินร้ายของกานมีอยู่ของ "ผู้ปะกาดพระทำปอม" (2 กรท 11:13).



ผู้ทำนอายที่แท้จิงจะเน้นสอนสอดล่องกับพระคำของพระเจ้า, ชี้ไปที่พระเยซู และ สร้างคริดตะจัก, ในขะนะที่ผู้ปะกาดพระทำปอมนั้นนำสะเหนิหลักคำสอนที่ทำให้เกิดความแตกแยก และ หาผินปะโหยดส่วนโต.

พวกเรา, ในถานะผู้เชื่อ ได้ชิงรุกเอิ้นให้กวดสอบผู้ทำนอาย และ ต้องมั่นใจว่า ถ้อยคำทังหมดเหล่านั้น ต้องสอดล่อง กับพระคำพี โดยมีพระเยซูเป็นใจกาง



สิ่งที่พวกเราจะป้องกันผู้ทำนอายปอม (รวมเถิงอำนาดชั่วร้ายที่มีอยู่) แม่นการสวมยุดทะพันที่พระเจ้าชิงทูมไว้ให้พวกเรา (อฟซ 6:10-18).

”ບັນດາບັນພະຊົນ, ຜູ້ທຳນວາຍ, ແລະ ອັກຄະສາວົກ ໄດ້ກ່າວ ຕາມທີ່ພຣະວິນຍານບໍຣິສຸດໄດ້ຊົງດົນໃຈພວກເຂົາ, ແລະ ພວກ ເຂົາໄດ້ກ່າວຢ່າງຈະແຈ້ງວ່າ ພວກເຂົາບໍ່ໄດ້ກ່າວດ້ວຍຣິດເດດ ຂອງຕົນເອງ, ຫຼື ໃນນາມຂອງຕົນເອງ. ພວກເຂົາປາຖະໜາທີ່ຈະ ບໍ່ໃຫ້ມີການຍົກຍ້ອງກຽດຕິຍົດໃດໆ ໃຫ້ກັບພວກເຂົາ, ເພື່ອບໍ່ໃຫ້ຜູ້ ໃດເບິ່ງວ່າພວກເຂົາເປັນຜູ້ລິເລີ່ມສິ່ງໃດສິ່ງໜຶ່ງທີ່ພວກເຂົາຈະ ສາມາດອວດອ້າງໄດ້. ພວກເຂົາຊົງຫວງແຫນກຽດຕິຍົດຂອງພຣະ ເຈົ້າ, ຜູ້ທີ່ຄຳສັນເສີນທັງໝົດເປັນຂອງພຣະອົງ. ພວກເຂົາໄດ້ ປະກາດວ່າ ຄວາມສາມາດຂອງພວກເຂົາ ແລະ ຂໍ້ຄວາມທີ່ພວກ ເຂົານຳມານັ້ນ ໄດ້ຖືກປະທານໃຫ້ກັບພວກເຂົາໃນຖານະຕົວແທນ ແຫ່ງຣິດເດດຂອງພຣະເຈົ້າ. ພຣະເຈົ້າຊົງເປັນອຳນາດ ແລະ ຄວາມພຽງພໍຂອງພວກເຂົາ."

EGW (To Be Like Jesus, July 30)

APPENDIX: ຫຼັກການສຳຄັນຂອງພັນທະກິດ ແລະ ການຮັບໃຊ້ຂອງ ທ່ານນາງ ເອລເລັນ ຈີ. ໄວທ໌

ພັນທະກິດຂອງ ທ່ານນາງ ເອລເລັນ ຈີ. ໄວທ໌ (Ellen G. White) ມີຈຸດເນັ້ນທີ່ເປັນຮາກຖານສອງປະການ ຄື: ການນຳພາຜູ້ຄົນໃຫ້ມາຫາພຣະເຢຊູ; ແລະ ການຫັນຄວາມສົນໃຈຂອງພວກເຂົາໄປສູ່ພຣະຄຳພີ.



ແກນທີ 1: ພຣະເຢຊູ

ຫຼັງຈາກການປະຊຸມໃຫຍ່ໃນປີ 1888, ເມື່ອຖືກຖາມກ່ຽວກັບຫົວຂໍ້ທີ່ໄດ້ຖືກຫາລືກັນ, ນາງໄດ້ຕອບວ່າ: "ຂ້າພະເຈົ້າໄດ້ນຳສະເໜີສິ່ງນີ້ໃຫ້ພວກທ່ານຟັງຕະຫຼອດ 45 ປີທີ່ຜ່ານມາ—ນັ້ນຄື ຄວາມງົດງາມອັນຫາທີ່ປຽບບໍ່ໄດ້ຂອງພຣະຄຣິດ" (Sermons and Talks, vol. 1, p. 116).





ແກນທີສອງ: ພຣະຄຳພີ (SECOND AXIS: THE BIBLE)

ເອລເລັນ (Ellen) ບໍ່ເຄີຍອ້າງວ່າຂໍ້ຂຽນຂອງນາງເໜືອກວ່າພຣະຄຳພີ ແຕ່ໄດ້ກະຕຸ້ນໃຫ້ມີການທົດສອບຂໍ້ຂຽນເຫຼົ່ານັ້ນດ້ວຍພຣະຄຳພີຢູ່ສະເໝີ. ໃນຖານະຜູ້ສົ່ງຂ່າວຂອງອົງພຣະຜູ້ເປັນເຈົ້າ, ນາງພິຈາລະນາຕົນເອງເປັນ "ຄວາມສະຫວ່າງທີ່ນ້ອຍກວ່າ" ທີ່ນຳພາຜູ້ຄົນໄປສູ່ "ຄວາມສະຫວ່າງທີ່ຍິ່ງໃຫຍ່ກວ່າ" ເຊິ່ງກໍຄື ພຣະຄຳພີ (Selected Messages, vol. 3, p. 29).

